ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

ກະຊວງກະສິກຳ ແລະ ປ່າໄມ້
ພະແນກກະສິກຳ ແລະ ປ່າໄມ້ນະຄອນຫລວງວຽງຈັນ

1175
ເລກທີ_____/ກປ.ນວ
ລົງວັນທີ 09 MAY 2014

ໃບອະນຸຍາດ
ດຳເນີນທຸລະກິດ ກະສິກຳ ແລະ ປ່າໄມ້

- ອີງຕາມກົດໝາຍວ່າດ້ວຍການສົ່ງເສີມ ການລົງທຶນ ເລກທີ 02/ ສພຊ, ລົງວັນທີ 08/07/2009.
- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 11/ສພຊ, ລົງວັນທີ 09/11/2005.
- ອີງຕາມກົດໝາຍວ່າດ້ວຍກະສິກຳ ສະບັບເລກທີ 01/98/ສພຊ,ລົງວັນທີ 10/10/1998.
- ອີງຕາມໃບທະບຽນວິສາຫະກິດສະບັບເລກທີ 1040/ຈຫວ, ລົງວັນທີ 03/10/2013.
- ອີງໃສ່ພະລະບິດບາດຂອງ ພະແນກກະສິກຳ ແລະ ປ່າໄມ້ນະຄອນຫລວງວຽງຈັນ.

ພະແນກກະສິກຳ ແລະ ປ່າໄມ້ນະຄອນຫລວງວຽງຈັນ

ຈຶ່ງອອກອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້ໃນໃຫ້: **ບໍລິສັດ ໂນຣິງໄກ-ລາວ ຈຳກັດຜູ້ດຽວ.**
ໃຫ້ແກ່ທ່ານ : ດຣ. ນາງ ວັນຄຳ ສີສົງຄາມ, (ສັນຊາດ : ລາວ), ອາຊີບ: ນັກທຸລະກິດ (ອຳນວຍການບໍລິສັດ).
ສຳນັກງານຫ້ອງການຕັ້ງຢູ່ບ້ານ : ໂພນພະເນົາ, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ.ໂທຣ : 021 412042, 020 55509755.
ສະຖານທີ່ດຳເນີນກິດຈະການຕັ້ງຢູ່ບ້ານ : ໂພນພະເນົາ, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ.
ກິດຈະການເຄື່ອນໄຫວ: - ນຳເຂົ້າ ແລະຈຳໜ່າຍປຸຍ, ຢາຂ້າຫຍ້າ, ຢາປາບສັດຕູພືດຈຸລິນຊີ.

ທຶນທັງໝົດຂອງບໍລິສັດ:	*1.000.000.000 ກີບ*	*(ໜຶ່ງຕື້ ກີບ).*
ທຶນຈົດທະບຽນຂອງບໍລິສັດ:	*1.000.000.000 ກີບ*	*(ໜຶ່ງຕື້ ກີບ).*

ມາດຕາ 1: ໃບອະນຸຍາດນີ້ໃຊ້ສະເພາະຜູ້ເປັນເຈົ້າຂອງເທົ່ານັ້ນ, ຫ້າມໃຫ້ຜູ້ອື່ນເຊົ່າ ຫລື ໃຊ້ຕາງ ແລະມີກຳນົດໃຊ້ 1 ປີ(ໜຶ່ງປີ).
ມາດຕາ 2: ວິສະຫະກິດຕາມໃບອະນຸຍາດນີ້ ຕ້ອງດຳເນີນກິດຈະການໃຫ້ສອດຄ່ອງຕາມກົດໝາຍແລະກິດລະບຽບອື່ນໆທີ່ລັດວາງອອກຢ່າງເຂັ້ມງວດ ພ້ອມທັງປະຕິບັດບັນດາເງື່ອນໄຂຕ່າງໆທີ່ໄດ້ລະບຸໄວ້ຢູ່ດ້ານຫຼັງຂອງໃບອະນຸຍາດນີ້.
ມາດຕາ 3: ໃບອະນຸຍາດສະບັບນີ້ມີຜົນສັກສິດແລະ ນຳໃຊ້ໄດ້ຢ່າງເປັນທາງການໃນເມື່ອໄດ້ຂຶ້ນທະບຽນວິສະຫະກິດ ນຳຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ ໄດ້ໃບຢັ້ງຢືນການມອບພັນທະອາກອນ ຈາກພະແນກລ່ວຍສາອາກອນ ນະຄອນ ຫລວງວຽງຈັນ ຈຶ່ງຖືວ່າຖືກຕ້ອງຕາມກົດໝາຍ ແລະ ນຳໃຊ້ໄດ້ຢ່າງເປັນທາງການ.

ໝາຍເຫດ: *(ປີ: 2014-2015)*
- ໝົດກຳນົດໃນວັນທີ 08/05/2015.

ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ນະຄອນຫລວງວຽງຈັນ

ໄກສອນ ອິນສີຊຽງໃໝ່

ວິສະຫະກິດຕາມໃບອະນຸຍາດສະບັບນີ້ຕ້ອງປະຕິບັດບັນດາເງື່ອນໄຂດັ່ງຕໍ່ລົງໄປນີ້:

1. ຕ້ອງຂຶ້ນທະບຽນວິສະຫະກິດ ນຳຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ພາຍໃນກຳນົດ 90 ວັນ ຫຼັງຈາກໄດ້ຮັບອະນຸຍາດສະບັບນີ້.
2. ວິສະຫະກິດນີ້ຕ້ອງດຳເນີນກິດຈະການໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍ: ວິສາຫະກິດ, ການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນໆ ທີ່ລັດວາງອອກຢ່າງເຂັ້ມງວດ.
3. ການດຳເນີນທຸລະກິດຕ້ອງສອດຄ່ອງຕາມສັນຍາແລະບົດວິພາກເສດຖະກິດ-ເຕັກນິກຂອງໂຄງການ.
4. ຫ້າມປ່ຽນແປງແລະດັດແກ້ຂໍ້ຄວາມໃດນຶ່ງໃນໃບອະນຸຍາດນີ້ຢ່າງເດັດຂາດ.
5. ຕ້ອງມອບພັນທະພາສີ ອາກອນຕ່າງໆ ຢ່າງຄົບຖ້ວນ ຕາມກຳນົດເວລາ ຕາມລະບຽບການ ວ່າດ້ວຍພາສີ ອາກອນ ທີ່ລັດວາງອອກ.
6. ການຂໍອະນຸຍາດຕໍ່ດຳເນີນທຸລະກິດກະສິກຳ ແລະ ປ່າໄມ້ ໃນສົກປີຕໍ່ໄປ, ເຈົ້າຂອງທຸລະກິດຕ້ອງປະກອບເອກະສານໃຫ້ສຳເລັດ ກ່ອນ 15 ວັນ ຂອງວັນໝົດກຳນົດນຳໃຊ້ໃບອະນຸຍາດໃບເກົ່າ.
7. ຖ້າເຈົ້າຂອງວິສະຫະກິດນີ້ ມີຈຸດປະສົງຢຸດເຊົາກິດຈະການຂອງຕົນ ຕ້ອງແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງລ່ວງໜ້າ 30 ວັນ ກ່ອນຈະຢຸດເຊົາກິດຈະການດັ່ງກ່າວ.
8. ຖ້າວິສະຫະກິດນີ້ດຳເນີນທຸລະກິດໂດຍບໍ່ມີໃບອະນຸຍາດ ຫຼື ໃບອະນຸຍາດໝົດກຳນົດແລ້ວ ຖືວ່າຜິດຕໍ່ລະບຽບຫຼັກການຂອງລັດວາງອອກ.
9. ກ່ອນການບຸກເບີກເນື້ອທີ່ປ່າໄມ້ ຫຼື ທີ່ດິນປ່າໄມ້ເພື່ອເຮັດການຜະລິດ ແຕ່ 3 - 100 ເຮັກຕາ ແລະ ກ່ອນການປ່ຽນຮູບທີ່ດິນກະສິກຳ ຕ້ອງຂໍອະນຸຍາດຈາກພະແນກກະສິກຳ ແລະ ປ່າໄມ້ນະຄອນຫຼວງວຽງຈັນ.
10. ວິສາຫະກິດຕ້ອງຮັບປະກັນ ດ້ານສະພາບແວດລ້ອມ ຢ່າງເຂັ້ມງວດ ບໍ່ໃຫ້ມີຜົນກະທົບຕໍ່ສັງຄົມ(ຖ້າມີບັນຫາເລື້ອງສະພາບແວດລ້ອມ ເຈົ້າຂອງວິສາຫະກິດ ຕ້ອງຮັບຜິດຊອບເອົາເອງທັງໝົດ).
11. ຖ້າວ່າ ບໍລິສັດ ເຄື່ອນໄຫວດຳເນີນກິດຈະການຢູ່ຕ່າງແຂວງຕ້ອງໄດ້ແຈ້ງຕໍ່ພະແນກກະສິກຳ ແລະ ປ່າໄມ້ ແຂວງນັ້ນ.